ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລ ສຸພານຸວົງ

ເລກທີ..174../ມຊ

ຫຼວງພະບາງ, ວັນທີ..໒໘..ກໍລະກົດ 2020

## ແຈ້ງການ

ເຖິງ: ນັກຮຽນ ຫຼື ນັກສຶກສາທີ່ຈົບມັດທະຍົມສົມບູນແຫ່ງຕ່າງໆຂອງລາວ

ເລື່ອງ: ການສະໝັກທຶນສະໜັບສະໜູນດ້ານການສຶກສາເກື້ອຝັນເດັກ (Child's Dream Foundation) ສົກຮຽນ 2020-2021

- ອີງຕາມ: ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ແລະ ມູນນິທິເກື້ອຝັນເດັກ (Child's Dream Foundation) ກ່ຽວກັບໂຄງການ: ໂຄງການ-ການຂະຫຍາຍໂອກາດໃນການເຂົ້າເຖິງການສຶກສາແບບຍືນຍົງ ໄລຍະເວລາ 3 ປີ ນັບແຕ່ມື້ທີ່ໄດ້ຮັບອະນຸມັດ ເຖິງ 31 ກໍລະກົດ 2021. ໃຫ້ທຶນໂດຍ: ມູນນິທິເກື້ອຝັນເດັກ ປະເທດສະວິສເຊີແລນ.

ມະຫາວິທະຍາໄລສຸພານຸວົງ ຂໍແຈ້ງເຖິງ: ນັກຮຽນ ຫຼື ນັກສຶກສາທີ່ມີຈຸດປະສົງສອບເສັງເຂົ້າຮຽນປີທີ 1 ຂອງມະຫາວິທະຍາໄລ ໃນສົກຮຽນ 2020-2021 ທີ່ຈະມາເຖິງນີ້. ຜູ້ທີ່ມີຄວາມສົນໃຈສະໝັກທຶນການສຶກສາ ໂດຍພາຍໃຕ້ທຶນມູນລະນິທິເກື້ອຝັນເດັກ (Child's Dream Foundation) ເຊິ່ງເປັນອົງກອນທີ່ຈັດຕັ້ງຂຶ້ນເພື່ອໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນສິດ, ຄຸນຄ່າຂອງເດັກນ້ອຍ ແລະ ເຍົາວະຊົນໃນລຸ່ມແມ່ນໍ້າຂອງໄດ້ແກ່: ປະເທດໄທ, ລາວ, ກໍາປູເຈຍ ແລະ ພະມ້າ. ລວມເຖິງການໃຫ້ຄວາມຊ່ວຍເຫຼືອສະໜັບສະໜູນທາງດ້ານການສຶກສາຂອງເດັກນ້ອຍ ໃນທຸກລະດັບຕໍ່ການໃຫ້ມີໂອກາດ ແລະ ອະນາຄົດທີ່ດີ. ເຊິ່ງທຶນດັ່ງກ່າວຈະໃຫ້ການສະໜັບສະໜູນ 20 ທຶນຕໍ່ປີໃນການສຶກສາລະດັບປະລິນຍາຕີ ຢູ່ມະຫາວິທະຍາໄລແຫ່ງຕ່າງໆຂອງລາວ. ຜູ້ທີ່ມີຄວາມສົນໃຈ ສາມາດເຂົ້າເບິ່ງລາຍລະອຽດຕ່າງໆດັ່ງນີ້:

- ເວັບໄຊ໌ www.childsdream.org
- ດາວໂຫລດເອົາໃບສະໝັກໄດ້ຈາກລິ້ງ: https://bit.ly/2zluLLu
- ສະໝັກອອນລາຍໄດ້ທີ່ ລິ້ງ: https://bit.ly/2Uvn5oy
- ຕິດຕໍ່ຜ່ານ ເຟສບຸກເພຈ https://www.facebook.com/CDHELaos
- ປິດຮັບໃບສະໝັກ ວັນທີ 31 ສິງຫາ 2020 ແລະ ສົ່ງໃບສະໝັກໄດ້ທີ່ ອີເມລ: cdusplb@gmail.com

ໝາຍເຫດ: ສໍາລັບມະຫາວິທະຍາໄລສຸພານຸວົງ ແມ່ນຈະບໍ່ມີສ່ວນຮັບຜິດຊອບໃນກໍລະນີຕ່າງໆຂອງທຶນດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງນັກຮຽນ ແລະ ນັກສຶກສາເພື່ອຊາບ.

ອະທິການບໍດີ

ຮສ. ປທ. ຮີໄຊ ຈັນສະຫວ່າງ